**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

====00====

ສຳນັກງານນາຍົກລັດຖະມົນຕີ — ເລກທີ ..169..../ ນຍ.

ນະຄອນຫລວງ ວຽງຈັນ, ວັນທີ ..26-11-2004

# ດຳລັດ
# ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ
# ຂອງ ຄະນະກຳມະການຊອກຄົ້ນແລະກູ້ໄພແຫ່ງຊາດ.

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ສະບັບເລກທີ 02/ສພຊ ລົງວັນທີ 6 ພຶດສະພາ 2003.
- ອີງຕາມການສະເໜີຂອງລັດຖະມົນຕີວ່າການກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ສະບັບເລກທີ 13587 / ຄຂປກ ລົງວັນທີ 21 / 10 / 2004.

## ນາຍົກລັດຖະມົນຕີ ອອກດຳລັດ :

## ໝວດທີ I
## ຂໍ້ກຳນົດທົ່ວໄປ

**ມາດຕາ 1.** ຈຸດປະສົງ

ດຳລັດສະບັບນີ້ກຳນົດພາລະບົດບາດ, ໜ້າທີ່ ແລະຂອບເຂດສິດ ຂອງຄະນະກຳມະການຊອກຄົ້ນແລະກູ້ໄພແຫ່ງຊາດ (ຄຊກຊ) ເພື່ອແນໃສ່ແກ້ໄຂບັນຫາການຊອກຄົ້ນເຄື່ອງບິນ, ພາຫະນະຂົນສົ່ງທາງບົກ ແລະ ທາງນ້ຳຊຶ່ງຕົກຢູ່ໃນພາວະສຸກເສີນຫລືເກີດອຸບັດຕິໄພ ແລະ ໃຫ້ການຊ່ວຍເຫລືອຜູ້ທີ່ຖືກເຄາະຮ້າຍຈາກເຫດການນັ້ນ ໃຫ້ທ່ວງທັນເວລາ ແລະ ມີປະສິດທິຜົນ. ສາມາດປະສານສົມທົບກັບລະບົບການຊອກຄົ້ນແລະກູ້ໄພຂອງບັນດາປະເທດອະນຸພາກພື້ນອ່າງແມ່ນ້ຳຂອງ(GMS) ກໍ່ຄື ຂອງອາຊຽນ ໄດ້ເປັນຢ່າງດີ.

**ມາດຕາ 2.** ທີ່ຕັ້ງ ແລະ ພາລະບົດບາດ.

ຄະນະກຳມະການຊອກຄົ້ນແລະກູ້ໄພແຫ່ງຊາດ ແມ່ນອົງການຈັດຕັ້ງຂອງລັດທີ່ບໍ່ປະຈຳການ, ມີທີ່ຕັ້ງຢູ່ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ, ມີພາລະບົດບາດເປັນໃຈກາງໃນການປະສານງານ, ຊີ້ນຳ ການກະກຽມ, ການຊອກຄົ້ນແລະກູ້ໄພການບິນ, ທາງບົກ ແລະ ທາງນ້ຳ ໃນທົ່ວປະເທດ ໃຫ້ທັນການ ແລະ ປະສານງານກັບບັນດາປະເທດອະນຸພາກພື້ນອ່າງແມ່ນ້ຳຂອງ ກໍ່ຄືອາຊຽນ ໃນວຽກງານການຊອກຄົ້ນແລະກູ້ໄພ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ
## ຂອງ ຄະນະກຳມະການຊອກຄົ້ນແລະກູ້ໄພແຫ່ງຊາດ

**ມາດຕາ 3.** ໜ້າທີ່

ຄະນະກຳມະການຊອກຄົ້ນແລະກູ້ໄພແຫ່ງຊາດ ມີໜ້າທີ່ດັ່ງຕໍ່ໄປນີ້ :

1. ກະກຽມເພື່ອການຊອກຄົ້ນແລະກູ້ໄພ ເມື່ອມີໄພພິບັດເກີດຂຶ້ນ;
2. ຊີ້ນຳລວມໃນການດຳເນີນການຊອກຄົ້ນແລະກູ້ໄພ ຕົວຈິງ;
3. ຄົ້ນຄວ້າຂໍ້ຕົກລົງ ລະຫວ່າງ ບັນດາຂະແໜງການຕ່າງໆທີ່ເຂົ້າຮ່ວມໃນຄະນະກຳມະການຊອກຄົ້ນແລະກູ້ໄພແຫ່ງຊາດ ເພື່ອເຊັນນຳກັນ ແລະ ສະເໜີຕໍ່ລັດຖະບານເພື່ອພິຈາລະນາຮັບຮອງເອົາ ຊຶ່ງຈະເປັນບ່ອນອີງໃນການນຳໃຊ້ຮ່ວມກັນ ບັນດາບຸກຄະລາກອນ, ພາຫະນະ, ອຸປະກອນ, ເຄື່ອງມື ຕາມຂໍ້ - 3 ລຸ່ມນີ້ ;
4. ຄົ້ນຄວ້າ ການແບ່ງປັນໜ້າທີ່ ຂອງແຕ່ລະພາກສ່ວນທີ່ເຂົ້າຮ່ວມໃນ ຄະນະກຳມະການຊອກຄົ້ນແລະກູ້ໄພແຫ່ງຊາດ ແລະ ສະເໜີຕໍ່ປະທານຄະນະກຳມະການພິຈາລະນາອະນຸມັດ;
5. ຄົ້ນຄວ້າລະບຽບການ ແລະ ວາງແຜນນະໂຍບາຍ ສະເໜີຕໍ່ປະທານຄະນະກຳມະການພິຈາລະນາ ສຳລັບການນຳໃຊ້ບຸກຄະລາກອນ, ພາຫະນະ, ອຸປະກອນ, ເຄື່ອງມືທີ່ຢູ່ນຳແຕ່ລະຂະແໜງການເຂົ້າຮ່ວມໃນຄະນະກຳມະການຊອກຄົ້ນແລະກູ້ໄພ ໃຫ້ເກີດປະໂຫຍດສູງສຸດ ລວມທັງການພັດທະນາບຸກຄະລາກອນ ແລະ ການຝຶກຊ້ອມ ປະສານງານລະຫວ່າງພາກສ່ວນທີ່ກ່ຽວຂ້ອງໃຫ້ມີຄວາມຊຳນິຊຳນານ ແລະ ຄ່ອງຕົວ;
6. ເຈລະຈາ ເຊັນສັນຍາສອງຝ່າຍ ຫລື ຫລາຍຝ່າຍດ້ານການຮ່ວມມືໃນການຊອກຄົ້ນແລະກູ້ໄພ ກັບປະເທດໃກ້ຄຽງ, ອາຊຽນ ແລະ ອົງການສາກົນຕາມການຕົກລົງເຫັນດີຈາກລັດຖະບານ;

7. ຈັດຕັ້ງເຜີຍແຜ່ ສັນຍາ ຂໍ້ຕົກລົງ ສອງແລະຫລາຍຝ່າຍອາຊຽນ, ກັບປະເທດໃກ້ຄຽງ ແລະ ສົນທິສັນຍາສາກົນຕ່າງໆ ທີ່ກ່ຽວພັນກັບວຽກງານການຊອກຄົ້ນແລະກູ້ໄພ;
8. ເຂົ້າຮ່ວມກອງປະຊຸມທັງພາຍໃນ ແລະ ຕ່າງປະເທດທີ່ກ່ຽວຂ້ອງກັບວຽກງານການຊອກຄົ້ນແລະກູ້ໄພ;
9. ໂຄສະນາ ຂົນຂວາຍໃຫ້ພາກສ່ວນເອກະຊົນ ຫລື ການຈັດຕັ້ງທີ່ບໍ່ສັງກັດລັດ ເຂົ້າປະກອບສ່ວນໃນການສະໜອງຂໍ້ມູນ ຂ່າວສານທີ່ເປັນປະໂຫຍດ ແລະ ເຂົ້າຮ່ວມການຊອກຄົ້ນແລະກູ້ໄພໃນກໍລະນີຈໍາເປັນ;

**ມາດຕາ 4.** ຂອບເຂດສິດ

1. ປະສານສົມທົບແລະພົວພັນກັບທຸກພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນແລະຕ່າງປະເທດທີ່ກ່ຽວພັນກັບພາລະບົດບາດແລະໜ້າທີ່ຂອງຕົນ;
2. ເຄື່ອນໄຫວແລກປ່ຽນ, ເກັບກໍາຂໍ້ມູນດ້ານການຈັດຕັ້ງປະຕິບັດ, ບົດຮຽນແລະປະສົບການຕົວຈິງຜ່ານມາ ກ່ຽວກັບວຽກງານການຊອກຄົ້ນແລະກູ້ໄພ;
3. ຈັດຕັ້ງເຜີຍແຜ່ ສັນຍາ ຂໍ້ຕົກລົງສອງແລະຫລາຍຝ່າຍ ກ່ຽວກັບການຊອກຄົ້ນແລະກູ້ໄພກັບປະເທດໃກ້ຄຽງ ອາຊຽນ ແລະ ອົງການສາກົນ;
   ຈັດຝຶກອົບຮົມລະບຽບການອັນໃໝ່, ທົບທວນຄືນບົດຮຽນເກົ່າຜ່ານມາ ແລະ ຝຶກຊ້ອມຮ່ວມກັນເປັນແຕ່ລະໄລຍະ ໃຫ້ເກີດຄວາມຊໍານານໃນການປະສານງານແລະປະຕິບັດຕົວຈິງ;
4. ນໍາໃຊ້ບຸກຄະລາກອນ, ພາຫະນະ, ອຸປະກອນ, ເຄື່ອງມື ແລະ ງົບປະມານຮ່ວມກັນ ຕາມການປະກອບແລະອະນຸມັດຈາກລັດຖະບານ; ແລະ
5. ສິດອື່ນໆ ຕາມການມອບໝາຍຂອງລັດຖະບານ.

## ໝວດ III
## ໂຄງປະກອບການຈັດຕັ້ງ

**ມາດຕາ 5.** ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ

5.1 ໂຄງປະກອບບຸກຄະລາກອນ

| | |
|---|---|
| 1. ລັດຖະມົນຕີວ່າການກະຊວງປ້ອງກັນປະເທດ | ເປັນປະທານ. |
| 2. ລັດຖະມົນຕີຊ່ວຍວ່າການກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ (ຄ.ຂ.ປ.ກ) | ເປັນຮອງປະທານ. |
| 3. ລັດຖະມົນຕີຊ່ວຍວ່າການກະຊວງປ້ອງກັນຄວາມສະຫງົບ | ເປັນຮອງປະທານ. |
| 4. ຫົວໜ້າກົມການບິນພົນລະເຮືອນ ກະຊວງ ຄ.ຂ.ປ.ກ | ເປັນກໍາມະການ. |

5. ທິວໜ້າກົມຂົນສົ່ງ ກະຊວງ ຄ.ຂ.ປ.ກ ເປັນກຳມະການ.
6. ທິວໜ້າກົມໄປສະນີແລະໂທລະຄົມ ກະຊວງ ຄ.ຂ.ປ.ກ ເປັນກຳມະການ.
7. ທິວໜ້າກົມສູ້ລົບ ກະຊວງ ປ້ອງກັນປະເທດ ເປັນກຳມະການ.
8. ທິວໜ້າກົມທະຫານອາກາດ ກະຊວງ ປ້ອງກັນປະເທດ ເປັນກຳມະການ.
9. ທິວໜ້າກົມຕຳຫລວດ ກະຊວງປ້ອງກັນຄວາມສະຫງົບ ເປັນກຳມະການ.
10. ທິວໜ້າກົມຕຳຫລວດດັບເພີງ ກະຊວງປ້ອງກັນຄວາມສະຫງົບ ເປັນກຳມະການ.
11. ທິວໜ້າກົມອຸຕຸນິຍົມແລະອຸທົກກະສາດ ກະຊວງກະສິກຳ ແລະປ່າໄມ້ ເປັນກຳມະການ.
12. ຜູ້ຕາງໜ້າ ກະຊວງສາທາລະນະສຸກ ເປັນກຳມະການ.
13. ຜູ້ຕາງໜ້າ ກະຊວງການຕ່າງປະເທດ ເປັນກຳມະການ.

5.2 ໂຄງປະກອບກົງຈັກ

ການຈັດຕັ້ງຂອງຄະນະກຳມະການຊອກຄົ້ນແລະກູ້ໄພແຫ່ງຊາດ ເປັນການຈັດຕັ້ງທີ່ບໍ່ປະຈຳການ ແຕ່ມີຫ້ອງການຊ່ວຍວຽກ ໂດຍຖືເອົາ "ສູນປະສານງານ-ວຽງຈັນ" (ສູນປະສານງານໃນການກູ້ໄພ) ຂອງກອງຄຸ້ມຄອງການບິນ(ຄຸ້ມຄອງຈະລາຈອນທາງອາກາດ) ກົມການບິນພົນລະເຮືອນ ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ເປັນກອງເລຂາຂອງຄະນະກຳມະການຊອກຄົ້ນແລະກູ້ໄພແຫ່ງຊາດ ແລະ ມີພະນັກງານປະຈຳການຈຳນວນໜຶ່ງຕາມຄວາມເໝາະສົມ ຊຶ່ງຄະນະກຳມະການຊອກຄົ້ນແລະກູ້ໄພແຫ່ງຊາດ ເປັນຜູ້ກຳນົດ.

## ໝວດ IV
## ແບບແຜນວິທີເຮັດວຽກ
## ຂອງ ຄະນະກຳມະການຊອກຄົ້ນແລະກູ້ໄພແຫ່ງຊາດ

**ມາດຕາ 6.** ຄະນະກຳມະການຊອກຄົ້ນແລະກູ້ໄພແຫ່ງຊາດ ເຄື່ອນໄຫວຕາມແບບແຜນວິທີເຮັດວຽກດັ່ງຕໍ່ໄປນີ້ :

1. ທຸກການເຄື່ອນໄຫວແມ່ນຍຶດໝັ້ນກັບ ແນວທາງນະໂຍບາຍຂອງພັກແລະລັດຖະບານ ພາຍໃຕ້ການຊີ້ນຳຂອງ ລັດຖະມົນຕີວ່າການກະຊວງປ້ອງກັນປະເທດ ປະທານຄະນະກຳມະການຊອກຄົ້ນແລະກູ້ໄພແຫ່ງຊາດ;
2. ເຮັດວຽກຕາມຫລັກການລວມສູນປະຊາທິປະໄຕບົນພື້ນຖານຄວາມເປັນເອກະພາບ;
3. ເຮັດວຽກແບບມີແຜນການ ແລະ ກຳນົດເວລາ;
4. ປະຕິບັດການສະຫລຸບ ລາຍງານຂັ້ນເທິງໃຫ້ທັນເວລາ.

**ມາດຕາ 7.** ມອບໃຫ້ລັດຖະມົນຕີວ່າການກະຊວງປ້ອງກັນປະເທດ ປະທານຄະນະກຳມະການຊອກຄົ້ນແລະກູ້ໄພແຫ່ງຊາດ ພັນລະທະຍາຍລະອຽດ, ກຳນົດແບບແຜນວິທີເຮັດວຽກ ແລະໜ້າທີ່ລະອຽດຂອງແຕ່ລະພາກສ່ວນທີ່ປະກອບເຂົ້າໃນຄະນະກຳມະການ ແລະ ໜ້າທີ່ຂອງ ສູນປະສານງານໃນການກູ້ໄພ(ກອງເລຂາ).

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 8.** ກາປະທັບ ແລະ ງົບປະມານ

ຄະນະກຳມະການຊອກຄົ້ນແລະກູ້ໄພແຫ່ງຊາດ ແລະ ສູນປະສານງານ-ວຽງຈັນ ມີກາປະທັບຂອງຕົນເອງ ເພື່ອນຳໃຊ້ເຂົ້າວຽກງານທາງລັດຖະການ.

ຄະນະກຳມະການຊອກຄົ້ນແລະກູ້ໄພແຫ່ງຊາດ ມີງົບປະມານສະເພາະເພື່ອໃຊ້ຈ່າຍເຂົ້າໃນວຽກງານການຊອກຄົ້ນແລະກູ້ໄພ ແລະ ບໍລິຫານວຽກງານປະຈຳວັນ ໂດຍການຂຶ້ນແຜນຄາດຄະເນລາຍຈ່າຍປະຈຳປີ ນຳຮ່ວງຂອງກະຊວງປ້ອງກັນປະເທດ ຫລື ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ.

**ມາດຕາ 9.** ການຈັດຕັ້ງປະຕິບັດ

ກະຊວງປ້ອງກັນປະເທດ ພ້ອມດ້ວຍບັນດາກະຊວງ,ອົງການທຽບເທົ່າກະຊວງ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້, ໃຫ້ຄວາມສະດວກ ແລະ ປະສານສົມທົບກັນ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ໃຫ້ໄດ້ຮັບຜົນດີ.

**ມາດຕາ 10.** ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ລະບຽບການໃດທີ່ຂັດກັບດຳລັດ ສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ນາຍົກລັດຖະມົນຕີແຫ່ງ ສ ປ ປ ລາວ**